**ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ເຄື່ອນໄຫວຂະບວນການມອບວັດຖຸປັດໃຈ ໃຫ້ແກ່ໂຮງໝໍມິດຕະພາບ (150 ຕຽງ) ເນື່ອງໃນວັນສ້າງຕັ້ງບໍລິສັດ ຄົບຮອບ 2 ປີ**

ເນື່ອງໃນໂອກາດວັນສ້າງຕັ້ງ ບໍລິສັດຂໍ້ມູນຂ່າວສານສານສິນເຊື່ອແຫ່ງ ສປປ ລາວ ຄົບຮອບ 2 ປີ (ວັນທີ 17/12/2019–17/12/2021) ທັງເປັນການປະກອບສ່ວນໃນການຕ້ານ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19. ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ (ຂສລ) ໄດ້ນໍາເອົາເງິນສົດ ຈໍານວນ 10,000,000 ກີບ ເຂົ້າມອບໃຫ້ແກ່ໂຮງໝໍມິດຕະພາບ (150 ຕຽງ).




ພິທີດັ່ງກ່າວໄດ້ຈັດຂຶ້ນໃນຕອນບ່າຍ ຂອງວັນທີ 16 ທັນວາ 2021 ທີ່ໂຮງໝໍມິດຕະພາບ (150 ຕຽງ) ຊຶ່ງນໍາພາຄະນະມອບໂດຍ ທ່ານ ນ. ວິນຄໍາ ລຸນທອນ ຜູ້ອໍານວຍການໃຫຍ່ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ແລະ ຮັບໂດຍ ທ່ານ ສອນໄຊ ລາດຊະວົງ ຜູ້ອໍານວຍການ ໂຮງໝໍມິດຕະພາບ (150ຕຽງ) ໂດຍມີຄະນະຜູ້ອໍານວຍການ, ຄະນະພະແນກ ແລະ ພະນັກງານວິຊາການທັງສອງຝ່າຍເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີດັ່ງກ່າວ ທ່ານ ນ. ວິນຄໍາ ລຸນທອນ ຜູ້ອໍານວຍການໃຫຍ່ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໄດ້ກ່າວມີຄໍາເຫັນວ່າ: ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ (ຂສລ) ເປັນລັດວິສາຫະກິດ ຊຶ່ງດໍາເນີນທຸລະກິດໃນຮູບແບບບໍລິສັດ ເຄື່ອນໄຫວພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ ມີພາລະບົດບາດເປັນສູນກາງເກັບກໍາ ແລະ ສະໜອງຂໍ້ມູນຂ່າວສານສິນເຊື່ອໃຫ້ແກ່ ສະມາຊິກ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ສົ່ງເສີມການເຂົ້າເຖິງແຫຼ່ງທຶນດ້ວຍຄວາມຍືນຍົງ ແນ່ໃສ່ຮັກສາສະຖຽນລະພາບທາງດ້ານການເງິນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.

ສະນັ້ນ, ເນື່ອງໃນໂອກາດວັນສ້າງຕັ້ງ ຄົບຮອບ 2 ປີນີ້ ຈຶ່ງເຫັນໄດ້ຄວາມສຳຄັນ ແລະ ເປັນນິມິດໝາຍອັນດີທີ່ປະກອບສ່ວນທຶນຮອນຊ່ວຍເຫຼືອສັງຄົມ ໃນວຽກງານຕ້ານ ແລະ ປ້ອງກັນການແຜ່ລະບາດຂອງພະຍາດ ໂຄວິດ 19 ທີ່ລັດຖະບານ ກໍ່ຄືຄະນະແພດໝໍທີ່ປະຈຳແຕ່ລະສູນການປິ່ນປົວ, ສູນກັກກັ້ນທີ່ໄດ້ສຸມໃສ່ແກ້ໄຂ ແລະ ປ້ອງກັນໃນປະຈຸບັນຖືວ່າມີສະພາບການທີ່ໜັກໜ່ວງພໍສົມຄວນ ເວົ້າລວມ ເວົ້າສະເພາະກໍ່ແມ່ນໂຮງໝໍມິດຕະພາບ (150 ຕຽງ) ທີ່ໂຮງໝໍເປັນດ້ານໜ້າຮັບປິ່ນປົວຜູ້ຕິດເຊື້ອຢ່າງຫຼວງຫຼາຍໃນແຕ່ລະວັນ. ອີກເທື່ອໜຶ່ງ, ຄະນະນຳບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຈຶ່ງໄດ້ນຳພາພະນັກງານ ເຄື່ອນໄຫວກິດຈະກຳຕິດພັນກັບການປະກອບສ່ວນຊ່ວຍເຫຼືອສັງຄົມໃນຄັ້ງນີ້. ເຖິງຢ່າງໃດກໍ່ຕາມເງິນສົດທີ່ນຳມາມອບໃນຄັ້ງນີ້ ຈະບໍ່ຫຼວງຫຼາຍແຕ່ກໍ່ຫວັງຢ່າງຍິ່ງວ່າຈະເປັນກຳລັງແຮງ, ກຳລັງໃຈໃຫ້ແກ່ແພດໝໍ ທີ່ເສຍສະຫຼະຕົນປະກອບສ່ວນໃນການຊ່ວຍເຫຼືອສັງຄົມກໍ່ຄືປະເທດຊາດ ໃຫ້ຫຼຸດພົ້ນຈາກວິກິດນີ້ໂດຍໄວ ແລະໃນໂອກາດໜ້າຈະພະຍາຍາມຊຸກຍູ້ລະດົມຂົນຂວາຍວັດຖຸປັດໃຈນຳມາປະກອບສ່ວນເພີ່ມຕື່ມ.

ເຖິງແນວໃດກໍ່ຕາມ, ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ບໍ່ພຽງແຕ່ຈະດຳເນີນວຽກງານໃຫ້ແທດເໝາະ ແລະ ສອດຄ່ອງຕາມແນວທາງຂອງຂັ້ນເທິງພັກ-ລັດ ວາງອອກເທົ່ານັ້ນ, ພວກເຮົາຈະຍັງຄົງດຳເນີນວຽກງານໄປຄຽງຄູ່ກັບການຊ່ວຍເຫຼືອສັງຄົມຕໍ່ໄປ.

ບົດຂ່າວ ແລະ ພາບໂດຍ: ພະແນກບໍລິຫານ ແລະ ສັງລວມ (ຂສລ)